ທຄຮ ແລະ ທຄຕລ-ກທ ລົງນາມ 2 ສັນຍາສຳຄັນ ຍົກລະດັບຮ່ວມມືທາງການເງິນ ແລະ ສະໜັບສະໜູນແຜນເພີ່ມທຶນຂອງທະນາຄານ, ວັນທີ 06 ເມສາ 2026







ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ແລະ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ (ທຄຕລ-ກທ) ໄດ້ຈັດພິທີລົງນາມສັນຍາສຳຄັນ 2 ສະບັບ ເພື່ອເສີມຂະຫຍາຍການຮ່ວມມືລະຫວ່າງສອງສະຖາບັນການເງິນພ້ອມທັງສະໜັບສະໜູນແຜນການເພີ່ມທຶນຈົດທະບຽນຂອງທະນາຄານໃນໄລຍະຕໍ່ໄປ, ເປັນກຽດເຂົ້າຮ່ວມພິທີໃນຄັ້ງນີ້ ລວມມີ ທ່ານ ສຸລິສັກ ທຳນຸວົງ , ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ທ່ານ ນາງ ແພງສີ ແພງເມືອງ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທ່ານ ສຽວສະຫວາດ ທິລາກຸນ, ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ, ຜູ້ບໍລິຫານຂັ້ນສູງຈາກ ທຄຮ ແລະ ທຄຕລ-ກທ ພ້ອມດ້ວຍຕາງໜ້າຈາກອົງການຄຸ້ມຄອງ ແລະ ພະນັກງານ ທຄຮ ແລະ ທຄຕລ-ກທ ເຂົ້າຮ່ວມເປັນສັກຂີພະຍານຢ່າງພ້ອມພຽງ.

ໃນພິທີ ໄດ້ມີການກ່າວຄຳເຫັນຂອງ ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ, ກ່ຽວກັບທິດທາງການພັດທະນາ ແລະ ຄວາມຈຳເປັນໃນການຂະຫຍາຍຖານທຶນ ໃນຍຸກທີ່ຕະຫຼາດມີການປ່ຽນແປງຢ່າງວ່ອງໄວ, ຄວາມຄ່ອງຕົວ ແລະ ຄວາມໜ້າເຊື່ອຖື ແມ່ນປັດໃຈທີ່ສຳຄັນທີ່ສຸດການປະສານສົມທົບ ລະຫວ່າງ ຄວາມເຂັ້ມແຂງດ້ານວຽກງານທະນາຄານຂອງ ທຄຮ ແລະ ຄວາມຊ່ຽວຊານດ້ານຫຼັກຊັບ ຂອງ ທຄຕລ-ກທ ຈະເປັນຂົວຕໍ່ທີ່ໝັ້ນຄົງ ລະຫວ່າງ ຂະແໜງທະນາຄານ ແລະ ຕະຫຼາດທຶນ. ຈາກນັ້ນທ່ານ ປອ ເທບສະຫວັນ ກິຕິຍະວົງ, ຜູ້ອຳນວຍການ ທຄຕລ-ກທ, ກໍໄດ້ກ່າວເຖິງຂອບເຂດການໃຫ້ບໍລິການໃນຖານະທີ່ປຶກສາດ້ານການເງິນແລະປົດບາດໃນການສະໜັບສະໜູນໂຄງການດັ່ງກ່າວ ແມ່ນການຮ່ວມມືແບບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ຊຶ່ງ ທຄຕລ-ກທ ກໍຄືຕະຫຼາດທຶນໂດຍລວມ ຈະສາມາດຂະຫຍາຍຖານຜູ້ລົງທຶນ ແລະ ໃນຂະນະດຽວກັນ ຜູ້ລົງທຶນທີ່ມີບັນຊີເງິນຝາກກັບ ທຄຮ ກໍຈະສາມາດເປີດບັນຊີຫຼັກຊັບເພື່ອຊື້ ຂາຍ ຮຸ້ນກັບ ທຄຕລ-ກທ ໄດ້ໂດຍກົງ ຊຶ່ງກໍຄືການເພີ່ມໂອກາດໃນການເຂົ້າເຖິງຕະຫຼາດທຶນຂອງຜູ້ລົງທຶນໃນ ສປປ ລາວ ໃຫ້ໄດ້ກ້ວ້າງຂວາງຂຶ້ນກວ່າເກົ່າ.

ສັນຍາສະບັບທຳອິດ ແມ່ນການແຕ່ງຕັ້ງ ທຄຕລ-ກທ ເປັນທີ່ປຶກສາດ້ານການເງິນ ສຳລັບແຜນການເພີ່ມທຶນຈົດທະບຽນຂອງ ທຄຮ. ເປົ້າໝາຍຂອງແຜນງານດັ່ງກ່າວ ແມ່ນເພື່ອເສີມສ້າງຄວາມແຂງແຮງດ້ານຖານທຶນ, ເພີ່ມຂີດຄວາມສາມາດໃນການຂະຫຍາຍສິນເຊື່ອ, ພັດທະນາບໍລິການການເງິນໃໝ່ ແລະ ຮອງຮັບການເຕີບໂຕຂອງທະນາຄານໃນໄລຍະຍາວ. ທຄຮ ຖືກສ້າງຕັ້ງໃນວັນທີ 21 ມັງກອນ 1989 ແລະ ເປັນທະນາຄານທຸລະກິດລຳດັບທີ 2 ທີ່ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ. ໃນເດືອນກັນຍາ 2025 ຜ່ານມາ ທຄຮ ໄດ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຊຶ່ງສາມາດເພີ່ມທຶນຈົດທະບຽນເປັນ 750 ຕື້ກີບ ແລະ ເລີ່ມການຊື້ ຂາຍ ຮຸ້ນໃນຕະຫຼາດຫຼັກຊັບລາວເປັນຄັ້ງທຳອິດໃນວັນທີ 10 ຕຸລາ 2025. ສຳລັບແຜນການເພີ່ມທຶນໃນປີ 2026 ນີ້, ທຄຮ ມີເປົ້າໝາຍເພື່ອຍົກລະດັບທຶນຈົດທະບຽນໃຫ້ບັນລຸຂັ້ນຕ່ຳ 1,000 ຕື້ກີບ ອີງຕາມຂໍ້ຕົກລົງວ່າດ້ວຍການເພີ່ມທຶນຈົດທະບຽນ ແລະ ເງື່ອນໄຂທຶນຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສະບັບເລກທີ 45/ນຍ, ລົງວັນທີ 11 ເມສາ 2025. ໃນການເພີ່ມທຶນໃນຄັ້ງນີ້ ທຄຮ ຈະນຳໃຊ້ສ່ວນຕ່າງມູນຄ່າຮຸ້ນ (Share Premium) ເປັນແຫຼ່ງທຶນສຳລັບການເພີ່ມທຶນໂດຍການອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມຂອງ ທຄຮ ຊຶ່ງຖືວ່າເປັນຄັ້ງທຳອິດຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ໄດ້ເພີ່ມທຶນໃນຮູບແບບນີ້. ການຕັດສິນໃຈຂອງ ທຄຮ ດັ່ງກ່າວນີ້ ແມ່ນການບໍລິຫານໂຄງສ້າງທຶນໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບກອບກົດໝາຍທີ່ກ່ຽວຂ້ອງ, ເພື່ອສະທ້ອນເຖິງຄວາມສຳຄັນຂອງການພັດທະນາສະຖາບັນການເງິນ, ການເສີມສ້າງຄວາມໝັ້ນຄົງໃຫ້ແກ່ລະບົບການເງິນ ກໍຄືການສົ່ງເສີມຕະຫຼາດທຶນລາວໃຫ້ເຕີບໂຕຢ່າງຕໍ່ເນື່ອງອີກດ້ວຍ.

ສ່ວນສັນຍາສະບັບທີສອງ ແມ່ນການແຕ່ງຕັ້ງ ທຄຮ ເປັນທະນາຄານຕົວແທນຊຳລະສະສາງຂອງ ທຄຕລ-ກທ ຊຶ່ງນັບເປັນທະນາຄານຕົວແທນຊຳລະສະສາງລຳດັບທີ 2 ຂອງ ທຄຕລ-ກທ. ການຮ່ວມມືດັ່ງກ່າວ ຈະຊ່ວຍເຊື່ອມໂຍງການໃຫ້ບໍລິການລະຫວ່າງທັງສອງຝ່າຍ ເຮັດໃຫ້ລູກຄ້າຂອງ ທຄຮ ທີ່ມີບັນຊີເງິນຝາກນຳ ທຄຮ ສາມາດເປີດບັນຊີຫຼັກຊັບ ແລະ ຊື້ ຂາຍຮຸ້ນຜ່ານ ທຄຕລ-ກທ ໄດ້ສະດວກຫຼາຍຂຶ້ນ ອັນເປັນການຂະຫຍາຍຖານຜູ້ລົງທຶນໃນຕະຫຼາດທຶນລາວໃຫ້ກ້ວ້າງຂວາງຂຶ້ນ. ພາຍຫຼັງ ທຄຮ ເປັນທະນາຄານຕົວແທນຊຳລະສະສາງຂອງ ທຄຕລ-ກທ ແລ້ວ ທຄຮ ກໍມີແຜນພັດທະນາລະບົບການຊື້ຂາຍ ຮຸ້ນ ຜ່ານມືຖື ເພື່ອສ້າງຄວາມສະດວກສະບາຍໃຫ້ແກ່ຜູ້ລົງທຶນ ທີ່ມີບັນຊີເງິນຝາກນຳ ທຄຮ ໃນການຊື້ ຂາຍຮຸ້ນ.

